# ຄໍານໍາ

ຈຸດປະສົງຂອງການແປປຶ້ມຫຼັກຈັນຍາບັນການທ່ອງທ່ຽວໂລກສະບັບນີ້ ເພື່ອສື່ຄວາມໝາຍ ແລະ ເຜີຍແຜ່ຂໍ້ມູນຢູ່ໃນປຶ້ມດັ່ງກ່າວໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃນການສົ່ງເສີມ ແລະ ພັດທະນາການທ່ອງທ່ຽວທັງພາກລັດ ແລະ ພາກທຸລະກິດຢູ່ໃນ ສປປ ລາວ ໃຫ້ຮັບຮູ້ ແລະ ເຂົ້າໃຈເປັນເອກະພາບກັນ ໂດຍເນັ້ນໃສ່ການປົກປັກຮັກສາສິ່ງແວດລ້ອມ, ການສ້າງວຽກເຮັດງານທໍາ ແລະ ການສ້າງລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າຕາມເປົ້າໝາຍການພັດທະນາແບບມີຄວາມຮັບຜິດຊອບ ແລະ ຍືນຍົງແຫ່ງສະຫະປະຊາຊາດໄດ້ກໍານົດໄວ້.

ປຶ້ມຫຼັກຈັນຍາບັນການທ່ອງທ່ຽວໂລກນີ້ ປະກອບມີ 10 ມາດຕາ ເຊັ່ນ: ການທ່ອງທ່ຽວສ້າງຄວາມເຂົ້າໃຈ ແລະ ການເຄົາລົບເຊິ່ງກັນ ແລະ ກັນລະຫວ່າງຄົນ ແລະ ສັງຄົມ; ການທ່ອງທ່ຽວເປັນຫົນທາງນໍາໄປສູ່ຄວາມເພິ່ງພໍໃຈສ່ວນບຸກຄົນ ແລະ ສ່ວນລວມ; ການທ່ອງທ່ຽວເປັນປັດໄຈໃນການພັດທະນາແບບຍືນຍົງ; ການທ່ອງທ່ຽວເປັນຜູ້ຊົມໃຊ້ ແລະ ສົ່ງເສີມມໍລະດົກທາງວັດທະນະທໍາຂອງມະນຸດ; ການທ່ອງທ່ຽວແມ່ນກິດຈະກໍາທີ່ກໍ່ໃຫ້ເກີດປະໂຫຍດຕໍ່ປະເທດຊາດ ແລະ ຊຸມຊົນເຈົ້າພາບ; ພັນທະຂອງພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ; ສິດທິໃນການທ່ອງທ່ຽວ; ເສລີພາບໃນການເດີນທາງຂອງນັກທ່ອງທ່ຽວ; ສິດທິຂອງຄົນເຮັດວຽກ ແລະ ຜູ້ປະກອບການໃນອຸດສາຫະກໍາການທ່ອງທ່ຽວ ແລະ ການຈັດຕັ້ງປະຕິບັດຫຼັກການຂອງຫຼັກຈັນຍາບັນການທ່ອງທ່ຽວໂລກ.

ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວທີ່ໃຫ້ການສະໜັບສະໜູນດ້ານ

ງົບປະມານເພື່ອແປ ແລະ ຈັດພິມປຶ້ມຫຼັກຈັນຍາບັນການທ່ອງທ່ຽວໂລກສະບັບນີ້ຂຶ້ນມາ.

ຫວັງຢ່າງຍິ່ງວ່າປຶ້ມຫຼັກຈັນຍາບັນການທ່ອງທ່ຽວໂລກນີ້ ຈະເປັນເອກະສານ ແລະ ແບບຢ່າງທີ່ດີໃຫ້ແກ່ການພັດທະນາວຽກງານການທ່ອງທ່ຽວ ທີ່ເນັ້ນໃສ່ການອະນຸລັກ ແລະ ປົກປັກຮັກສາຊັບພະກອນທ່ອງທ່ຽວໃນ ສປປ ລາວໃຫ້ມີຄວາມຍືນຍົງຕະຫຼອດໄປ.

# ສາລະບານ

ຄຳນຳ ....................................................................i

ຫຼັກຈັນຍາບັນການທ່ອງທ່ຽວໂລກ ....................................1

ການທ່ອງທ່ຽວສ້າງຄວາມເຂົ້າໃຈ ແລະ ການເຄົາລົບເຊິ່ງກັນ ແລະ ກັນ ລະຫວ່າງຄົນ ແລະ ສັງຄົມ .............................................6

ການທ່ອງທ່ຽວເປັນຫົນທາງນຳໄປສູ່ຄວາມເພິ່ງພໍໃຈສ່ວນບຸກຄົນ ແລະ ສ່ວນລວມ ..........................................................9

ການທ່ອງທ່ຽວເປັນປັດໄຈໃນການພັດທະນາແບບຍືນຍົງ..................11

ການທ່ອງທ່ຽວເປັນຜູ້ຊົມໃຊ້ ແລະ ສິ່ງເສີມມໍລະດົກທາງວັດທະນະທຳຂອງມະນຸດ......................................................13

ການທ່ອງທ່ຽວແມ່ນກິດຈະກຳທີ່ກໍ່ໃຫ້ເກີດປະໂຫຍດຕໍ່ປະເທດ ແລະ ຊຸມຊົນເຈົ້າພາບ ....................................................15

ພັນທະຂອງພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ......17

ສິດທິໃນການທ່ອງທ່ຽວ ..........................................20

ເສລີພາບໃນການເດີນທາງຂອງນັກທ່ອງທ່ຽວ ............................21

ສິດທິຂອງຄົນເຮັດວຽກ ແລະ ຜູ້ປະກອບການໃນອຸດສະຫະກຳການທ່ອງທ່ຽວ...........................................................23

ການຈັດຕັ້ງປະຕິບັດຫຼັກການຂອງຫຼັກຈັນຍາບັນການທ່ອງທ່ຽວທ່ຽວໂລກ.26

ຂະບວນການໃຫ້ຄຳປຶກສາ ແລະ ໄກ່ເກ່ຍ ເພື່ອຫາຂໍ້ຍຸດຕິກຳລະນີມີຂໍ້ຂັດແຍ່ງ ໃນການຈັດຕັ້ງປະຕິບັດຫຼັກຈັນຍາບັນການທ່ອງທ່ຽວໂລກ..................27

ແນວທາງການພິຈາລະນາຂໍ້ຂັດແຍ່ງ ..........................................32

ຫຼັກການທີ່ໃຊ້ສຳລັບການອ້າງອີງ ..............................................33

# ຫຼັກຈັນຍາບັນການທ່ອງທ່ຽວໂລກ

ຮັບຮອງໂດຍຂໍ້ຕົກລົງທີ A/RES/406 (XIII) ທີ່ກອງປະຊຸມສະມັດຊາໃຫຍ່ຂອງອົງການທ່ອງທ່ຽວໂລກຄັ້ງທີ 13 ວັນທີ 27 ກັນຍາ - 1 ຕຸລາ 1999 ທີ່ ແຂວງຊານຕິອາໂກ, ປະເທດຊິລີ.

## ບົດນຳ

**ພວກເຮົາທັງຫຼາຍໃນຖານະສະມາຊິກຂອງອົງການການທ່ອງທ່ຽວໂລກ (WTO), ຜູ້ແທນຈາກອຸດສາຫະກຳການທ່ອງທ່ຽວໂລກ, ຜູ້ແທນຂອງລັດ, ດິນແດນ, ອົງການ, ສະຖາບັນ ແລະ ນິຕິບຸກຄົນທີ່ມາຮອມໂຕກັນໃນການປະຊຸມສະມັດຊາໃຫຍ່ ທີ່ ແຂວງຊານຕິອາໂກ, ປະເທດຊິລີ ໃນວັນທີ 1 ຕຸລາ 1999.**

**ໂດຍໄດ້ເນັ້ນ**ເຖິງຈຸດປະສົງທີ່ລະບຸໄວ້ໃນມາດຕາ 3 ຂອງລັດຖະທຳມະນູນຂອງອົງການທ່ອງທ່ຽວໂລກ ແລະ ເນັ້ນໃສ່ບົດບາດໜ້າທີ່ “ເປັນກາງ ແລະ ເດັດຂາດ” ຂອງອົງການນີ້ ຕາມທີ່ໄດ້ຮັບການຍອມຮັບຈາກກອງປະຊຸມສະມັດຊາໃຫຍ່ ຂອງອົງການສະຫະປະຊາຊາດໃນການສົ່ງເສີມ ແລະ ພັດທະນາການທ່ອງທ່ຽວ ເພື່ອໃຫ້ເກີດການພັດທະນາທາງເສດຖະກິດ, ຄວາມເຂົ້າໃຈອັນດີງາມລະຫວ່າງປະເທດ, ສັນຕິພາບ, ຄວາມຈະເລີນຮຸ່ງເຮືອງ ໄປຈົນຮອດການເຄົາລົບນັບຖື ແລະ ການປະຕິບັດຕາມສິດທິມະນຸດ ແລະ ເສລີພາບຂັ້ນ

ພື້ນຖານຕ່າງໆ ຂອງທຸກໆຄົນໂດຍທົ່ວໜ້າ ໂດຍບໍ່ໄດ້ຄຳນຶງເຖິງຄວາມແຕກຕ່າງດ້ານເຊື້ອຊາດ, ເພດ, ພາສາ ແລະ ສາດສະໜາ.

**ໂດຍເຊື່ອໝັ້ນ**ວ່າ ການທ່ອງທ່ຽວເປັນພະລັງອັນສຳຄັນທີ່ຈະນຳໄປສູ່ສັນຕິພາບ ທີ່ຈະກໍ່ໃຫ້ເກີດມິດຕະພາບ ແລະ ຄວາມເຂົ້າໃຈອັນດີງາມ ລະຫວ່າງຄົນຕ່າງຊາດໃນທົ່ວໂລກ ເນື່ອງຈາກວ່າການທ່ອງທ່ຽວກໍ່ໃຫ້ເກີດການຕິດຕໍ່ເຊິ່ງກັນ ແລະ ກັນໂດຍກົງທີ່ເປັນໄປໂດຍທຳມະຊາດ ແລະ ປາສະຈາກເຫດຜົນອື່ນໆ ລະຫວ່າງ ຍິງ-ຊາດ ທີ່ມີວັດທະນະທຳທີ່ແຕກຕ່າງກັນ.

**ໂດຍຍຶດຕາມຫຼັກການ**ໃນການອະນຸລັກສິ່ງແວດລ້ອມ, ການພັດທະນາເສດຖະກິດ ແລະ ການຕໍ່ສູ້ກັບຄວາມທຸກຍາກທີ່ມີລັກສະນະຍາວນານ ຕາມທີ່ອົງການສະຫະປະຊາຊາດໄດ້ກຳນົດໄວ້ໃນປີ 1992 ທີ່ "ກອງປະຊຸມສຸດຍອດວ່າດ້ວຍສິ່ງແວດລ້ອມ" ທີ່ ແຂວງຣິໂອເດີຈານີໂຣ ແລະ ໄດ້ລະບຸໄວ້ຢູ່ໃນ ວາລະທີ 21 ທີ່ໄດ້ຖືກຮັບຮອງຢູ່ທີ່ກອງປະຊຸມດັ່ງກ່າວນີ້.

**ໂດຍຄຳນຶງເຖິງ**ການຂະຫຍາຍຕົວທີ່ຕໍ່ເນື່ອງ ແລະ ວ່ອງໄວຂອງກິດຈະກຳການທ່ອງທ່ຽວ ບໍ່ວ່າຈະເປັນໃນອະດີດ ແລະ ອະນາຄົດ ບໍ່ວ່າຈະມີຈຸດປະສົງສຳລັບການພັກຜ່ອນຍ່ອນໃຈ, ດ້ານທຸລະກິດ, ວັດທະນະທຳ, ສາດສະໜາ ຫຼື ສຸຂະພາບ ແລະ ຜົນກະທົບ ທັງທາງບວກ ແລະ ທາງລົບ ທີ່ມີຕໍ່ສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ ຂອງປະເທດ, ແຫຼ່ງກຳເນີດນັກທ່ອງທ່ຽວ ຫຼື ປະເທດທີ່ຮັບນັກທ່ອງທ່ຽວ, ຜົນກະທົບຕໍ່ຊຸມຊົນທ້ອງຖິ່ນ ລວມທັງການພົວພັນ ແລະ ການຄ້າລະຫວ່າງປະເທດອີກດ້ວຍ.

**ໂດຍແນໃສ່**ການສົ່ງເສີມການທ່ອງທ່ຽວແບບມີຄວາມຮັບຜິດຊອບ, ມີຄວາມຍືນຍົງ ແລະ ເປັນການທ່ອງທ່ຽວທີ່ທຸກຄົນສາມາດເຂົ້າເຖິງໄດ້ ພາຍໃຕ້ຂອບເຂດສິດທິຂອງທຸກຄົນທີ່ຈະໃຊ້ເວລາຫວ່າງເພື່ອເປັນການພັກຜ່ອນ ຫຼື ທ່ອງທ່ຽວໂດຍເຄົາລົບຕໍ່ສັງຄົມຂອງຄົນທຸກຊາດ.

**ໃນຂະນະດຽວກັນຕ້ອງໝັ້ນໃຈ**ວ່າອຸດສາຫະກຳການທ່ອງທ່ຽວໂລກໂດຍລວມຈະໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍ ຖ້າດຳເນີນຕາມສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ເສດຖະກິດການຕະຫຼາດ, ພາກທຸລະກິດ ແລະ ການຄ້າເສລີ ຊຶ່ງຈະກໍ່ໃຫ້ເກີດຜົນປະໂຫຍດໃນການສ້າງຄວາມຮັ່ງມີ ແລະ ການສ້າງວຽກເຮັດງານທຳ.

**ແລະ ຍັງເຊື່ອໝັ້ນ**ວ່າ ຖ້າປະຕິບັດຕາມກົດລະບຽບ ແລະ ຫຼັກການດັ່ງກ່າວນີ້, ການທ່ອງທ່ຽວແບບມີຄວາມຮັບຜິດຊອບ ແລະ ຍືນຍົງ ແມ່ນສິ່ງທີ່ສາມາດປະຕິບັດໄດ້ ຄວບຄູ່ໄປກັບການເປີດເສລີດ້ານການຄ້າ ທີ່ເປັນສະຖານະພາບທີ່ຄວບຄຸມການດຳເນີນງານຂອງທຸລະກິດການທ່ອງທ່ຽວ. ນອກຈາກນີ້, ຍັງເຊື່ອໝັ້ນອີກວ່າ ການເປັນອັນໜຶ່ງອັນດຽວກັນລະຫວ່າງເສດຖະກິດ, ລະບົບນິເວດວິທະຍາ, ສິ່ງແວດລ້ອມ ແລະ ການພັດທະນາ ທີ່ເປີດການຄ້າເສລີລະຫວ່າງປະເທດ ແລະ ການປົກປັກຮັກສາເອກະລັກທາງສັງຄົມ ແລະ ວັດທະນະທຳ ຖືວ່າແມ່ນສິ່ງທີ່ເປັນໄປໄດ້.

**ໂດຍຄຳນຶງ**ວ່າ ດ້ວຍແນວທາງນີ້, ພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ ບໍ່ວ່າຈະເປັນໜ່ວຍງານບໍລິຫານລະດັບຊາດ, ລະດັບພາກພື້ນ, ລະດັບທ້ອງຖິ່ນ, ຫົວໜ່ວຍທຸລະກິດ, ສະມາຄົມທຸລະກິດ, ພະນັກງານທີ່ເຮັດ

ວຽກໃນອຸດສາຫະກຳການທ່ອງທ່ຽວ, ອົງການທີ່ບໍ່ສັງກັດລັດ ແລະ ນິຕິບຸກຄົນທຸກປະເທດທີ່ກ່ຽວຂ້ອງໃນອຸດສາຫະກຳການທ່ອງທ່ຽວ ລວມທັງຊຸມຊົນແຫຼ່ງທ່ອງທ່ຽວ, ສື່ມວນຊົນ ແລະ ນັກທ່ອງທ່ຽວເອງ ໂດຍຄຳນຶງເຖິງສິດທິ ແລະ ໜ້າທີ່ຂອງຕົນ ຊຶ່ງຈະເປັນປັດໄຈໜຶ່ງທີ່ຊ່ວຍໃຫ້ບັນລຸຈຸດປະສົງນີ້ໄດ້.

**ໂດຍຍຶດຖື**ຈຸດປະສົງທີ່ອົງການທ່ອງທ່ຽວໂລກໄດ້ກຳນົດໄວ້ຕັ້ງແຕ່ມີການຮັບຮອງເອົາມະຕິທີ 364/(XII) ທີ່ກອງປະຊຸມສະມັດຊາໃຫຍ່ ໃນປີ 1997 (ທີ່ແຂວງອິດສະຕັນບູນ) ໂດຍມີຈຸດປະສົງສົ່ງເສີມໃຫ້ມີການເຮັດວຽກຮ່ວມກັນລະຫວ່າງພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກເອກະຊົນໃນການພັດທະນາການທ່ອງທ່ຽວ ແລະ ຕ້ອງການໃຫ້ມີການຮ່ວມມືຢ່າງກ້ວາງຂວາງ, ເປີດເຜີຍ ແລະ ດຸນດ່ຽງກັນ ລະຫວ່າງປະເທດສົ່ງອອກນັກທ່ອງທ່ຽວ ແລະ ປະເທດຮັບນັກທ່ອງທ່ຽວ ແລະ ອຸດສາຫະກຳການທ່ອງທ່ຽວຂອງປະເທດດັ່ງກ່າວໃນທິດທາງທີ່ເໝາະສົມ.

**ໂດຍເປັນການຕິດຕາມຜົນ**ຂອງຖະແຫຼງການມະນີລາ ປີ 1980 ວ່າດ້ວຍການທ່ອງທ່ຽວໂລກ ແລະ ປີ 1997 ວ່າດ້ວຍ ຜົນກະທົບຂອງການທ່ອງທ່ຽວທີ່ມີຕໍ່ສັງຄົມ ແລະ ບົດບັນຍັດວ່າດ້ວຍສິດທິການທ່ອງທ່ຽວ ແລະ ຈະລິຍະທຳການທ່ອງທ່ຽວ ທີ່ໄດ້ຮັບຮອງເອົາ ທີ່ ແຂວງໂຊເຟຍ ໃນປີ 1985 ພາຍໃຕ້ການສະໜັບສະໜູນຂອງອົງການທ່ອງທ່ຽວໂລກ.

**ໂດຍເຊື່ອວ່າ**ບັນດາເອກະສານເຫຼົ່ານີ້ຄວນໄດ້ຮັບການແປທີ່ດີ ແລະ ນຳໄປໝູນໃຊ້ໃຫ້ເກີດຜົນປະໂຫຍດສູງສຸດ ທັງນີ້ກໍ່ເພື່ອສົ່ງເສີມໃຫ້ພາກສ່ວນທີ່ກ່ຽວ

ຂ້ອງໃນການພັດທະນາການທ່ອງທ່ຽວໄດ້ປະຕິບັດຕາມໃຫ້ເປັນແບບຢ່າງທີ່ດີ ເລີ່ມແຕ່ຕົ້ນສັດຕະວັດທີ 21 ເປັນຕົ້ນໄປ.

ເພື່ອຜົນປະໂຫຍດຂອງຫຼັກຈັນຍາບັນການທ່ອງທ່ຽວໂລກນີ້, ການນໍາໃຊ້ຄໍາສັບ ແລະ ການຈໍາແນກປະເພດຕ່າງໆ ທີ່ກ່ຽວຂ້ອງກັບການທ່ອງທ່ຽວ ໂດຍສະເພາະຄວາມໝາຍຂອງຄໍາສັບ: "ຜູ້ມາຢ້ຽມຢາມ", "ນັກທ່ອງທ່ຽວ" ແລະ "ການທ່ອງທ່ຽວ" ເຊິ່ງໄດ້ຮັບຮອງຢູ່ກອງປະຊຸມຄະນະກໍາມາທິການສະຖິຕິຂອງອົງການສະຫະປະຊາຊາດ ຄັ້ງທີ 27 ໃນປີ 1993.

**ຂໍຢືນຢັນສິດໃນການທ່ອງທ່ຽວ ແລະ ເສລີພາບໃນການເດີນທາງຂອງນັກທ່ອງທ່ຽວ**

**ພວກເຮົາຂໍປະກາດເຈດຈໍານົງໃນສິ່ງເສີມການຈັດລະບຽບການທ່ອງທ່ຽວທີ່ມີຄວາມສະເໝີພາບ, ມີຄວາມຮັບຜິດຊອບ ແລະ ຍືນຍົງ ໃຫ້ທຸກພາກສ່ວນຂອງສັງຄົມໄດ້ຮັບຜົນປະໂຫຍດຈາກການທ່ອງທ່ຽວໃນບໍລິບາດຂອງເສດຖະກິດນານາຊາດທີ່ເປີດກວ້າງ ແລະ ເສລີ.**

**ທ້າຍສຸດນີ້, ຂໍໃຫ້ຫຼັກການຂອງຫຼັກຈັນຍາບັນການທ່ອງທ່ຽວໂລກນີ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຈິງຈັງ.**

# ມາດຕາ 1



## ການທ່ອງທ່ຽວສ້າງຄວາມເຂົ້າໃຈ ແລະ ການເຄົາລົບເຊິ່ງກັນ ແລະ ກັນ ລະຫວ່າງຄົນ ແລະ ສັງຄົມ

1. ຄວາມເຂົ້າໃຈ ແລະ ການສົ່ງເສີມຄ່ານິຍົມທາງຈາລິຍະທຳທົ່ວໄປຂອງມວນມະນຸດ ໂດຍການຍອມຮັບ ແລະ ການເຄົາລົບຄວາມຫຼາກຫຼາຍທາງສາສະໜາ, ປັດຊະຍາ ແລະ ຄວາມເຊື່ອທາງສິນທຳ ຊຶ່ງທັງສອງປະການນີ້ເປັນຮາກຖານ ແລະ ຜົນຂອງການທ່ອງທ່ຽວແບບມີຄວາມຮັບຜິດຊອບ. ພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ ແລະ ຕົວນັກທ່ອງທ່ຽວເອງ ຄວນປະຕິບັດຕາມປະເພນີທາງສັງຄົມ, ວັດທະນະທຳ, ການປະຕິບັດຂອງຜູ້ຄົນທັງຫຼາຍ ເຊິ່ງລວມເຖິງຊົນກຸ່ມນ້ອຍ ແລະ ຊົນເຜົ່າທ້ອງຖິ່ນ ແລະ ຍອມຮັບຄຸນຄ່າຂອງຄົນເຫຼົ່ານັ້ນ.

2. ກິດຈະກຳການທ່ອງທ່ຽວຕ່າງໆ ບໍ່ຄວນຂັດຕໍ່ລັກສະນະສະເພາະ, ຮີດຄອງປະເພນີຂອງພາກພື້ນ, ປະເທດເຈົ້າພາບ ແລະ ເຄົາລົບຕໍ່ກົດໝາຍ, ຫຼັກປະຕິບັດ ແລະ ຮີດຄອງປະເພນີຂອງປະເທດເຈົ້າພາບນັ້ນໆ.

3. ຊຸມຊົນເຈົ້າພາບ ແລະ ຜູ້ປະກອບອາຊີບຄວນຮູ້ຈັກການເຄົາລົບ ແລະ ນັບຖືນັກທ່ອງທ່ຽວທີ່ມາຢ້ຽມຢາມ, ຮຽນຮູ້ວິຖີຊີວິດ, ອາຫານ ແລະ ຄວາມຄາດຫວັງຂອງນັກທ່ອງທ່ຽວ. ການໃຫ້ຄວາມຮູ້ ແລະ ການຝຶກອົບຮົມໃຫ້ແກ່ຜູ້ປະກອບອາຊີບຕ່າງໆ ຈະນຳໄປສູ່ການບໍລິການ ແລະ ການຕ້ອນຮັບທີ່ດີ.

4. ເປັນໜ້າທີ່ຂອງອຳນາດການປົກຄອງພາກລັດໃນການຄຸ້ມຄອງ ແລະ ປົກປ້ອງນັກທ່ອງທ່ຽວ, ຜູ້ມາຢ້ຽມຢາມ ແລະ ຊັບສິນຂອງເຂົາເຈົ້າ. ໜ່ວຍງານພາກລັດຕ້ອງເອົາໃຈໃສ່ດ້ານຄວາມປອດໄພຂອງນັກທ່ອງທ່ຽວຕ່າງປະເທດ ເນື່ອງຈາກວ່ານັກທ່ອງທ່ຽວບາງປະເພດອາດມີຄວາມສ່ຽງສູງ. ໜ່ວຍງານພາກລັດຄວນໃຫ້ຄວາມຊ່ວຍເຫຼືອໃນການໃຫ້ຂໍ້ມູນ-ຂ່າວສານ, ການຮັກສາຄວາມປອດໄພ, ການປະກັນໄພ ແລະ ຄວາມຊ່ວຍເຫຼືອທີ່ກ່ຽວກັບຄວາມຕ້ອງການຂອງນັກທ່ອງທ່ຽວ. ການໂຈມຕີ, ການທຳຮ້າຍ, ການລັກພາຕົວ ຫຼື ໄພຄຸກຄາມອື່ນໆ ທີ່ເກີດຂຶ້ນກັບນັກທ່ອງທ່ຽວ ຫຼື ຜູ້ທີ່ເຮັດວຽກໃນອຸດສາຫະກຳການທ່ອງທ່ຽວ ລວມທັງການທຳລາຍສິ່ງອຳນວຍຄວາມສະດວກໃນການທ່ອງທ່ຽວ, ການທຳລາຍວັດຖຸທີ່ເປັນມໍລະດົກທາງທຳມະຊາດ ຫຼື ວັດທະນະທຳໂດຍເຈດຕະນາ ຄວນຖືກປະນາມ ແລະ ລົງໂທດຢ່າງຈິງຈັງຕາມກົດໝາຍຂອງປະເທດນັ້ນໆ.

5. ໃນລະຫວ່າງການເດີນທາງ, ນັກທ່ອງທ່ຽວ ແລະ ຜູ້ມາຢ້ຽມຢາມບໍ່ຄວນກໍ່ອາດຊະຍາກຳ ຫຼື ການກະທຳອື່ນໆ ທີ່ເປັນອາດຊະຍາກຳຕາມກົດໝາຍຂອງປະເທດທີ່ຕົນໄປຢ້ຽມຢາມນັ້ນ ແລະ ຄວນຫຼີກລ່ຽງການກະທຳຕ່າງໆທີ່ເປັນການຝ່າຝືນ ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ປະຊາຊົນທ້ອງຖິ່ນ ຫຼື ອາດຈະສ້າງຄວາມເສຍຫາຍຕໍ່ກັບສິ່ງແວດລ້ອມໃນທ້ອງຖິ່ນ. ນັກທ່ອງທ່ຽວຄວນຫຼີກລ່ຽງການຄ້າຢາເສບຕິດ, ອາວຸດ, ໂບຮານວັດຖຸ, ສັດ ແລະ ພືດ ທີ່ໄດ້ຮັບການຄຸ້ມຄອງ ແລະ ວັດຖຸທີ່ເປັນອັນຕະລາຍ ຫຼື ຕ້ອງຫ້າມຕາມລະບຽບກົດໝາຍຂອງປະເທດທີ່ໄປຢ້ຽມຢາມນັ້ນ.

6. ກ່ອນການເດີນທາງ, ນັກທ່ອງທ່ຽວ ແລະ ຜູ້ມາຢ້ຽມຢາມຕ້ອງຮູ້ຈັກຄຸນລັກສະນະຕ່າງໆ ຂອງປະເທດທີ່ຕົນຈະໄປຢ້ຽມຢາມນັ້ນ. ນັກທ່ອງທ່ຽວຕ້ອງຄຳນຶງເຖິງຄວາມສ່ຽງດ້ານສຸຂະພາບ ແລະ ຄວາມປອດໄພທີ່ແອບແຝງຢູ່ໃນການເດີນທາງອອກນອກສະພາບແວດລ້ອມຂອງຕົນທີ່ຕົນຄຸ້ນເຄີຍ ແລະ ຈະຕ້ອງປະພຶດຕົນຢ່າງດີ ທັງນີ້ກໍ່ເພື່ອເຮັດໃຫ້ມີຄວາມສ່ຽງເຫຼົ່ານັ້ນໃຫ້ນ້ອຍທີ່ສຸດ.

# ມາດຕາ 2



## ການທ່ອງທ່ຽວເປັນຫົນທາງນຳໄປສູ່ຄວາມເພິ່ງພໍໃຈສ່ວນບຸກຄົນ ແລະ ສ່ວນລວມ

1. ການທ່ອງທ່ຽວຖືເປັນກິດຈະກຳທີ່ກ່ຽວຂ້ອງກັບການພັກຜ່ອນຢ່ອນໃຈ, ການກິລາ ແລະ ເປັນຊ່ອງທາງໃນການເຂົ້າເຖິງວັດທະນະທຳ ແລະ ທຳມະຊາດ ທີ່ຄວນມີການກະກຽມ ແລະ ການດຳເນີນງານທີ່ສ້າງຄວາມເພິ່ງພໍໃຈສ່ວນບຸກຄົນ ແລະ ສ່ວນລວມ. ຖ້າການທ່ອງທ່ຽວດ້ວຍຈິດໃຈທີ່ເປີດກວ້າງ, ການທ່ອງທ່ຽວນັ້ນຖືວ່າເປັນປັດໄຈທີ່ບໍ່ສາມາດຫາສິ່ງໃດມາທົດແທນໄດ້ໃນການຊ່ວຍໃຫ້ເກີດການຮຽນຮູ້ດ້ວຍຕົນເອງ, ການຍອມຮັບເຊິ່ງກັນ ແລະ ກັນ ແລະ ການຮຽນຮູ້ຄວາມແຕກຕ່າງລະຫວ່າງຜູ້ຄົນ, ວັດທະນະທຳ ແລະ ຄວາມຫຼາກຫຼາຍຂອງຜູ້ຄົນເຫຼົ່ານັ້ນ.

2. ກິດຈະກຳການທ່ອງທ່ຽວຄວນເຄົາລົບຕໍ່ຄວາມສະເໝີພາບກັນລະຫວ່າງຍິງ-ຊາຍ ແລະ ຄວນເປັນກິດຈະກຳທີ່ສົ່ງເສີມສິດທິມະນຸດ ໂດຍສະເພາະແມ່ນສິດທິສ່ວນບຸກຄົນຂອງກຸ່ມຜູ້ທີ່ເບາະບາງທີ່ສຸດ ເຊັ່ນ: ເດັກນ້ອຍ, ຜູ້ສູງອາຍຸ, ຄົນພິການ, ຄົນກຸ່ມນ້ອຍ ແລະ ຄົນພື້ນເມືອງ.

3. ການສະແຫວງຫາປະໂຫຍດຈາກມະນຸດ ບໍ່ວ່າໃນຮູບແບບໃດກໍຕາມ ໂດຍສະເພາະຮູບແບບທີ່ກ່ຽວຂ້ອງກັບເພດທີ່ກະທຳຕໍ່ເດັກ, ການກະທຳນັ້ນຂັດຕໍ່ຈຸດປະສົງພື້ນຖານຂອງການທ່ອງທ່ຽວ ແລະ ຍັງເປັນຜົນກະທົບທາງລົບຕໍ່ການທ່ອງທ່ຽວອີກດ້ວຍ. ດັ່ງນັ້ນ, ເພື່ອໃຫ້ສອດຄ່ອງກັບກົດໝາຍລະຫວ່າງປະເທດ, ທຸກປະເທດທີ່ກ່ຽວຂ້ອງຄວນຮ່ວມມືກັນຕໍ່ຕ້ານ

ຢ່າງເອົາຈິງເອົາຈັງ ພ້ອມທັງດຳເນີນການລົງໂທດຕາມກົດໝາຍແຫ່ງຊາດຂອງປະເທດເຈົ້າພາບ ແລະ ປະເທດຂອງຜູ້ກະທຳຄວາມຜິດ ໂດຍບໍ່ມີການລົດຍ່ອນຜ່ອນໂທດ ເຖິງວ່າການກະທຳຄວາມຜິດດັ່ງກ່າວຈະເກີດຂຶ້ນໃນປະເທດທີ່ບໍ່ແມ່ນປະເທດບ້ານເກີດຂອງຜູ້ກະທຳຄວາມຜິດກໍຕາມ.

4. ການເດີນທາງເພື່ອຈຸດປະສົງທາງສາສະໜາ, ສຸຂະພາບ, ການສຶກສາ ແລະ ການແລກປ່ຽນທາງວັດທະນະທຳ ຫຼື ພາສາ ຖືວ່າເປັນຮູບແບບການທ່ອງທ່ຽວທີ່ເປັນປະໂຫຍດ ແລະ ຄວນໄດ້ຮັບການສະໜັບສະໜູນ.

5. ການນຳເອົາຄວາມຮູ້ກ່ຽວກັບຄຸນຄ່າຂອງການແລກປ່ຽນນັກທ່ອງທ່ຽວ, ຜົນປະໂຫຍດດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ທີ່ເກີດຈາກການແລກປ່ຽນດັ່ງກ່າວ ລວມທັງ ໄພອັນຕະລາຍ ແລະ ຄວາມສ່ຽງຂອງການແລກປ່ຽນດັ່ງກ່າວ ເຂົ້າເປັນສ່ວນໜຶ່ງໃນຫຼັກສູດການຮຽນ-ການສອນ ແລະ ເປັນສິ່ງທີ່ຄວນໄດ້ຮັບການສະໜັບສະໜູນ.

# ມາດຕາ 3



## ການທ່ອງທ່ຽວເປັນປັດໄຈໃນການພັດທະນາແບບຍືນຍົງ

1. ທຸກພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ ຄວນປົກປັກຮັກສາສິ່ງແວດລ້ອມທາງທຳມະຊາດ ດ້ວຍເຈດຕະນາທີ່ເຮັດໃຫ້ເກີດການຈະເລີນເຕີບໂຕທາງເສດຖະກິດທີ່ໝັ້ນຄົງ, ຕໍ່ເນື່ອງ ແລະ ຍືນຍົງ ເພື່ອສາມາດຕອບສະໜອງກັບຄວາມຕ້ອງການ ແລະ ຄວາມຄາດຫວັງຂອງຄົນຮຸ່ນຕ່າງໆ ທັງໃນປັດຈຸບັນ ແລະ ອະນາຄົດ.

2. ການພັດທະນາການທ່ອງທ່ຽວທຸກຮູບແບບທີ່ສາມາດນຳໄປສູ່ການປະຢັດຊັບພະຍາກອນທີ່ມີຄ່າ ແລະ ຫາຍາກ ໂດຍສະເພາະນ້ຳ ແລະ ພະລັງງານ ແລະ ການຫຼີກລ່ຽງການກະທຳຕ່າງໆທີ່ກໍ່ໃຫ້ເກີດມີຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຕ່າງໆ ໃຫ້ໄດ້ໜ້ອຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ຊຶ່ງຄວນຖືເປັນບູລິມະສິດ ແລະ ຄວນໄດ້ຮັບການສົ່ງເສີມຈາກອຳນາດການປົກຄອງພາກລັດທັງລະດັບຊາດ, ລະດັບພາກພື້ນ ແລະ ລະດັບທ້ອງຖິ່ນ.

3. ການຈັດເວລາການທ່ອງທ່ຽວ ແລະ ການບໍລິຫານຂົງເຂດທີ່ມີນັກທ່ອງທ່ຽວ ແລະ ຜູ້ມາຢ້ຽມຢາມເຂົ້າມາທ່ຽວຫຼາຍ ໂດຍສະເພາະແມ່ນນັກທ່ອງທ່ຽວ ທີ່ພັກວຽກມາທ່ຽວ, ຊ່ວງເວລາປິດພາກຮຽນ ແລະ ຄວນມີການຈັດວັນພັກໃຫ້ກະຈາຍກັນອອກໄປ ເພື່ອຫຼຸດຜ່ອນຜົນກະທົບຂອງກິດຈະກຳການທ່ອງທ່ຽວທີ່ມີຕໍ່ສິ່ງແວດລ້ອມ ແລະ ເພື່ອຊ່ວຍເພີ່ມຜົນດີແກ່ອຸດສາຫະກຳການທ່ອງທ່ຽວ ແລະ ເສດຖະກິດທ້ອງຖິ່ນ.

4. ຄວນມີການອອກແບບພື້ນຖານໂຄງລ່າງການທ່ອງທ່ຽວ ແລະ ກິດຈະກຳການທ່ອງທ່ຽວ ທີ່ສາມາດຊ່ວຍປົກປັກຮັກສາມໍລະດົກທາງທຳມະຊາດ ຊຶ່ງປະກອບມີ ລະບົບນິເວດ ແລະ ຊີວະນານາພັນ ແລະ ເພື່ອອະນຸລັກສັດ ແລະ ພືດທີ່ໃກ້ສູນພັນ. ພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ ໂດຍສະເພາະຜູ້ປະກອບອາຊີບຕ່າງໆ ຄວນກຳນົດ ຫຼື ຈຳກັດກິດຈະກຳຕ່າງໆ ຂອງຕົນໃນຂົງເຂດ ທີ່ມີຄວາມອ່ອນໄຫວ ເຊັ່ນ: ທະເລຊາຍ, ຂົ້ວໂລກ ຫຼື ເຂດພູເຂົາສູງ, ເຂດແຄມຝັ່ງ, ປ່າເຂດຮ້ອນ ຫຼື ໜອງ ເຊິ່ງເໝາະແກ່ການເປັນເຂດສະຫງວນ ຫຼື ເຂດຄຸ້ມຄອງ.

5. ການທ່ອງທ່ຽວທາງທຳມະຊາດ ແລະ ການທ່ອງທ່ຽວແບບອະນຸລັກແມ່ນຮູບແບບການທ່ອງທ່ຽວທີ່ຊ່ວຍຍົກລະດັບການທ່ອງທ່ຽວ ແລະ ໄດ້ຮັບການຍອມຮັບວ່າສາມາດສົ່ງເສີມການທ່ອງທ່ຽວແບບຍາວນານ ຊຶ່ງຕ້ອງໄດ້ເຄົາລົບມໍລະດົກທາງທຳມະຊາດ, ປະຊາກອນທ້ອງຖິ່ນ ແລະ ຄຳນຶງເຖິງຂີດຄວາມສາມາດໃນການຮອງຮັບນັກທ່ອງທ່ຽວຂອງແຫຼ່ງທ່ອງທ່ຽວນັ້ນໆ.

# ມາດຕາ 4



## ການທ່ອງທ່ຽວເປັນຜູ້ຊົມໃຊ້ ແລະ ສົ່ງເສີມມໍລະດົກທາງວັດທະນະທຳຂອງມະນຸດ

1. ຊັບພະຍາກອນການທ່ອງທ່ຽວເປັນມໍລະດົກສ່ວນລວມຂອງມະນຸດ. ຊຸມຊົນທີ່ຕັ້ງຢູ່ໃນຂົງເຂດຂອງຊັບພະຍາກອນນັ້ນ ແມ່ນມີສິດ ແລະ ມີພັນທະຕໍ່ຊັບພະຍາກອນການທ່ອງທ່ຽວນັ້ນ.

2. ນະໂຍບາຍ ແລະ ກິດຈະກຳການທ່ອງທ່ຽວຄວນສອດຄ່ອງກັບມໍລະດົກທາງສິນລະປະ, ບູຮານຄະດີ ແລະ ວັດທະນະທຳ ທີ່ຄວນໄດ້ຮັບການປົກປັກຮັກສາ ແລະ ສືບທອດໃຫ້ຄົນຮຸ່ນຕໍ່ໆໄປ, ຄວນມີການເອົາໃຈໃສ່ຮັກສາເບິ່ງແຍງເປັນພິເສດ ແລະ ປັບປຸງອານຸສາວະລີ, ສະຖານທີ່ສະກະລະບູຊາ ແລະ ຫໍພິພິດຕະພັນ ລວມທັງແຫຼ່ງບູຮານຄະດີ ແລະ ປະຫວັດສາດຕ່າງໆ ເຊິ່ງສະຖານທີ່ເຫຼົ່ານີ້ຄວນເປີດໃຫ້ນັກທ່ອງທ່ຽວເຂົ້າຊົມ. ຊັບສິນທາງວັດທະນະທຳ ແລະ ອານຸສາວະລີຂອງເອກະຊົນກໍ່ຄວນໄດ້ຮັບການສົ່ງເສີມໃຫ້ເປີດໃຫ້ນັກທ່ອງທ່ຽວທົ່ວໄປໄດ້ເຂົ້າໄປທ່ຽວຊົມ ໂດຍບໍ່ລະເມີດສິດທິຂອງເຈົ້າຂອງຊັບສິນນັ້ນໆ ລວມທັງອາຄານທາງສາດສະໜາເຊິ່ງຄວນເປີດໃຫ້ເຂົ້າຊົມໂດຍບໍ່ເປັນການລົບກວນການເຮັດພິທີທາງສາສະໜາທີ່ເຄີຍປະຕິບັດມາ.

3. ເງິນທີ່ໄດ້ຮັບຈາກການເປີດໃຫ້ເຂົ້າຊົມສະຖານທີ່ທາງວັດທະນະທຳ ແລະ ອານຸສາວະລີ ຢ່າງນ້ອຍບາງສ່ວນຄວນໃຊ້ເຂົ້າໃນການບຳລຸງຮັກສາ, ຄຸ້ມຄອງ, ພັດທະນາ ແລະ ຕົກແຕ່ງປັບປຸງມໍລະດົກນັ້ນໆ.

4. ກິດຈະກຳການທ່ອງທ່ຽວຄວນດຳເນີນໄປຕາມວິຖີທາງທີ່ຊ່ວຍເຮັດໃຫ້ຜະລິດຕະພັນທາງວັດທະນະທຳທີ່ເປັນຮີດຄອງປະເພນີ, ເຄື່ອງຫັດຖະກຳ ແລະ ນິທານພື້ນເມືອງ ດຳລົງຄົງຕົວຢູ່ລອດ ແລະ ຈະເລີນຮຸ່ງເຮືອງ ໂດຍບໍ່ເຮັດໃຫ້ສິ່ງເຫຼົ່ານີ້ເຊື່ອມລົງ ແລະ ກາຍເປັນຜະລິດຕະພັນທີ່ບໍ່ມີເອກະລັກ ດັ່ງທີ່ພວກເຮົາພົບເຫັນທົ່ວໄປ.

## ມາດຕາ 5



### ການທ່ອງທ່ຽວແມ່ນກິດຈະກໍາທີ່ກໍ່ໃຫ້ເກີດປະໂຫຍດຕໍ່ປະເທດ ແລະ ຊຸມຊົນເຈົ້າພາບ

1. ປະຊາຊົນທ້ອງຖິ່ນຄວນມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກກິດຈະກໍາການທ່ອງທ່ຽວ ທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທໍາ ຢ່າງເປັນທໍາ ໂດຍສະເພາະຜົນປະໂຫຍດຈາກແຮງງານຂອງພວກເຂົາທັງທາງກົງ ແລະ ທາງອ້ອມ.

2. ນະໂຍບາຍການທ່ອງທ່ຽວ ຄວນນໍາມາປະຕິບັດໃນທາງທີ່ຊ່ວຍຍົກລະດັບການເປັນຢູ່ຂອງປະຊາຊົນໃນທ້ອງຖິ່ນໃຫ້ດີຂຶ້ນ ແລະ ສາມາດຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າໄດ້, ການວາງແຜນ ແລະ ການອອກແບບທາງສະຖາປັດຕະຍະກໍາ ແລະ ການດໍາເນີນງານຂອງສະຖານທີ່ພັກແຮມຄວນເຮັດໃຫ້ມີຄວາມກົມກືນກັບສັງຄົມ ແລະ ເສດຖະກິດຂອງທ້ອງຖິ່ນໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ແລະ ດ້ານສີມືແຮງງານທີ່ເທົ່າທຽມກັນກໍ່ຄວນໃຫ້ໂອກາດແກ່ແຮງງານໃນທ້ອງຖິ່ນນັ້ນເປັນບູລິມະສິດພິເສດ.

3. ຄວນເອົາໃຈໃສ່ເປັນພິເສດຕໍ່ບັນຫາເຂດແຄມຝັ່ງ, ເຂດເກາະດອນ ແລະ ຊົນນະບົດ ຫຼື ເຂດພູເຂົາທີ່ມີຄວາມອ່ອນໄຫວ ຊຶ່ງການທ່ອງທ່ຽວເປັນໂອກາດທີ່ດີໃນການພັດທະນາ ແລະ ເຮັດໃຫ້ຂົງເຂດເຫຼົ່ານີ້ປະເຊີນກັບບັນຫາໃນການປະກອບອາຊີບແບບດັ້ງເດີມຫຼຸດໜ້ອຍລົງ.

4. ຜູ້ປະກອບອາຊີບດ້ານການທ່ອງທ່ຽວ ໂດຍສະເພາະນັກລົງທຶນ ຊຶ່ງຢູ່ພາຍໃຕ້ລະບຽບກົດໝາຍທີ່ອອກໂດຍອຳນາດການປົກຄອງພາກລັດ ຄວນເຮັດບົດວິໄຈຜົນກະທົບຈາກໂຄງການພັດທະນາຂອງຕົນຕໍ່ສິ່ງແວດລ້ອມ ແລະ ທຳມະຊາດ. ນອກຈາກນີ້, ຜູ້ປະກອບການຄວນຊີ້ແຈງຂໍ້ມູນດ້ວຍຄວາມໂປ່ງໃສ ແລະ ມີຂໍ້ມູນກ່ຽວກັບແຜນງານໃນອະນາຄົດ ແລະ ຜົນກະທົບຈາກແຜນງານນັ້ນແກ່ປະຊາຊົນທີ່ກ່ຽວຂ້ອງ.

## ມາດຕາ 6



### ພັນທະຂອງພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ

1. ຜູ້ປະກອບການທ່ອງທ່ຽວມີໜ້າທີ່ ໃນການສະໜອງຂໍ້ມູນກ່ຽວກັບສະຖານທີ່ທ່ອງທ່ຽວ, ສະພາບການເດີນທາງ, ການບໍລິການ ແລະ ການເຂົ້າພັກແຮມທີ່ເປັນຈິງ ແລະ ຖືກຕ້ອງ ໃຫ້ແກ່ນັກທ່ອງທ່ຽວ. ຜູ້ປະກອບການຕ້ອງຮັບປະກັນດ້ານເນື້ອໃນທີ່ສະເໜີໃຫ້ນັກທ່ອງທ່ຽວນັ້ນ ເຊັ່ນ: ຮູບແບບ, ລາຄາ ແລະ ຄຸນນະພາບການບໍລິການ ລ້ວນແລ້ວແຕ່ເປັນຈິງ ແລະ ເຂົ້າໃຈໄດ້ງ່າຍ ແລະ ມີການຈ່າຍຄ່າຊົດເຊີຍໃຫ້ນັກທ່ອງທ່ຽວຄືນ ຖ້າຫາກຜູ້ປະກອບການນັ້ນບໍ່ປະຕິບັດຕາມສັນຍາ.

2. ຜູ້ປະກອບການທ່ອງທ່ຽວຄວນໃຫ້ຄວາມຮ່ວມມືກັບພາກລັດໃນການເອົາໃຈໃສ່ບັນຫາດ້ານຄວາມໝັ້ນຄົງ, ຄວາມປອດໄພ, ການປ້ອງກັນອຸບັດຕິເຫດ, ການປ້ອງກັນສຸຂະພາບ ແລະ ຄວາມປອດໄພດ້ານອາຫານແກ່ຜູ້ໃຊ້ບໍລິການ. ໃນເວລາດຽວກັນ, ຜູ້ປະກອບການຕ້ອງເຮັດໃຫ້ລະບົບການປະກັນໄພ ແລະ ການຊ່ວຍເຫຼືອທີ່ມີຢູ່ນັ້ນໃຫ້ມີຄວາມເໝາະສົມ. ຜູ້ປະກອບການຄວນຍອມຮັບກົດລະບຽບກ່ຽວກັບການລາຍງານຂໍ້ມູນກ່ຽວກັບສະຖານປະກອບການຂອງຕົນ ຕາມລະບຽບກົດໝາຍແຫ່ງຊາດ ແລະ ຕ້ອງຈ່າຍຄ່າຊົດເຊີຍໃນກໍລະນີທີ່ບໍ່ສາມາດປະຕິບັດຕາມສັນຍາໄດ້.

3. ຜູ້ປະກອບການທ່ອງທ່ຽວຄວນມີສ່ວນຮ່ວມໃນການຕອບສະໜອງຄວາມຕ້ອງການທາງດ້ານວັດທະນະທຳ ແລະ ທາງສາດສະໜາຂອງນັກທ່ອງທ່ຽວ ແລະ ອະນຸຍາດໃຫ້ນັກທ່ອງທ່ຽວສາມາດປະຕິບັດກິດຈະກຳທາງສາດສະໜາໃນຊ່ວງເວລາທີ່ກຳລັງທ່ອງທ່ຽວຢູ່ນັ້ນ.

4. ໜ່ວຍງານພາກລັດຢູ່ໃນປະເທດທີ່ສົ່ງອອກນັກທ່ອງທ່ຽວ ແລະ ໃນປະເທດເຈົ້າພາບ ລວມທັງຜູ້ປະກອບອາຊີບທີ່ກ່ຽວຂ້ອງຕ້ອງມີກົນໄກຕ່າງໆທີ່ຈຳເປັນ ເພື່ອສົ່ງຕົວນັກທ່ອງທ່ຽວກັບຄືນປະເທດ ໃນກໍລະນີບໍລິສັດທີ່ຈັດທ່ອງທ່ຽວນັ້ນລົ້ມລະລາຍ.

5. ລັດຖະບານມີສິດ ແລະ ໜ້າທີ່ ໃນການແຈ້ງໃຫ້ຄົນໃນຊາດຮັບຮູ້ກ່ຽວກັບອຸປະສັກ ຫຼື ອັນຕະລາຍທີ່ນັກທ່ອງທ່ຽວອາດປະເຊີນ ຫຼື ພົບພໍ້ໃນຂະນະທີ່ກຳລັງທ່ອງທ່ຽວຢູ່ຕ່າງປະເທດ ໃນກໍລະນີເກີດວິກິດການ. ເຖິງຢ່າງໃດກໍຕາມ, ການແຈ້ງເຫດນັ້ນຈະຕ້ອງເປັນໄປດ້ວຍຄວາມຮັບຜິດຊອບໂດຍໃຫ້ຂໍ້ມູນທີ່ເປັນທຳ ຫຼື ບໍ່ເກີນຄວາມເປັນຈິງ ເຊິ່ງອາດກໍ່ໃຫ້ເກີດຄວາມລຳອຽງຕໍ່ອຸດສາຫະກຳການທ່ອງທ່ຽວຂອງປະເທດເຈົ້າພາບ ແລະຜົນປະໂຫຍດຕໍ່ຜູ້ປະກອບການການທ່ອງທ່ຽວໃນປະເທດຂອງຕົນ. ລາຍລະອຽດກ່ຽວກັບການເດີນທາງຄວນຜ່ານການປຶກສາກັບເຈົ້າໜ້າທີ່ຂອງປະເທດເຈົ້າພາບ ແລະ ຜູ້ປະກອບການທີ່ກ່ຽວຂ້ອງ. ການໃຫ້ຄຳແນະນຳຄວນມີນ້ຳໜັກສອດຄ່ອງກັບຄວາມເປັນຈິງຂອງສະຖານະການ ແລະ ຈຳກັດຢູ່ໃນສະຖານທີ່ທີ່ເກີດສະຖານະການຄວາມບໍ່ປອດໄພ ຊຶ່ງຄວນມີການຍືນຍັນ ຫຼື ຍົກເລີກໂດຍໄວທີ່ສຸດ ຫາກສະຖານະການກັບເຂົ້າສູ່ສະພາບປົກກະຕິ.

6. ສື່ໂດຍສະເພາະສື່ການທ່ອງທ່ຽວ ແລະ ສື່ອື່ນໆ ລວມທັງສື່ອີເລັກໂທຣນິກ ຄວນໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ສອດຄ່ອງກັບເຫດການ ແລະ ສະຖານະການທີ່ມີຜົນຕໍ່ການຫຼັ່ງໄຫຼເຂົ້າມາຂອງນັກທ່ອງທ່ຽວ. ສື່ຕ່າງໆ ຄວນໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ເຊື່ອຖືໄດ້ແກ່ຜູ້ໃຊ້ບໍລິການການທ່ອງທ່ຽວ. ຄວນມີການພັດທະນາຮູບແບບການສື່ສານ ແລະ ການໂຄສະນາທາງອີເລັກໂທຣນິກ ແລະ ຮັບໃຊ້ວຽກນີ້ໂດຍສະເພາະ. ໃນຖານະທີ່ເປັນສື່, ບໍ່ຄວນມີການສົ່ງເສີມການທ່ອງທ່ຽວທາງເພດບໍ່ວ່າໃນກໍລະນີໃດກໍຕາມ.

# ມາດຕາ 7



## ສິດທິໃນການທ່ອງທ່ຽວ

1. ມະນຸດໂລກມີສິດເທົ່າທຽມກັນໃນການເຂົ້າເຖິງຊັບພະຍາກອນໂລກ ເພື່ອຄົ້ນຫາ ແລະ ສະແຫວງຫາຄວາມມ່ວນຊື່ນລື່ນເລີງ. ການທ່ອງທ່ຽວພາຍໃນປະເທດ ແລະ ຕ່າງປະເທດເພີ່ມຂຶ້ນຢ່າງວ່ອງໄວ ເຊິ່ງຖືວ່າເປັນຮູບແບບການໃຊ້ເວລາຫວ່າງທີ່ດີທີ່ສຸດ ແລະ ບໍ່ຄວນມີອຸປະສັກໃດໆຂັດຂວາງການທ່ອງທ່ຽວ.

2. ສິດທິສາກົນໃນການທ່ອງທ່ຽວ ຖືວ່າເປັນຜົນຂອງສິດທິໃນການພັກຜ່ອນຍ່ອນໃຈ ລວມທັງການຈຳກັດຊົ່ວໂມງເຮັດວຽກທີ່ເໝາະສົມ ແລະ ວັນພັກບາງຄັ້ງຄາວທີ່ຍັງໄດ້ຮັບເງິນເດືອນ/ຄ່າຈ້າງຢູ່ ຊຶ່ງມີການຮັບຮອງຢູ່ໃນມາດຕາ 24 ຂອງຖະແຫຼງການສາກົນວ່າດ້ວຍສິດທິມະນຸດ ແລະ ມາດຕາ 7 ຄ. ຂອງສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນະທຳ.

3. ພາກລັດຄວນສະໜັບສະໜູນການພັດທະນາການທ່ອງທ່ຽວເພື່ອສັງຄົມ ແລະ ການທ່ອງທ່ຽວແບບເຊື່ອມໂຍງ (Associative Tourism) ທີ່ຊ່ວຍໃຫ້ມີການພັກຜ່ອນ, ການເດີນທາງ ແລະ ວັນພັກຢ່າງກວ້າງຂວາງ.

4. ຄວນສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວທີ່ເດີນທາງເປັນຄອບຄົວ, ຊາວໜຸ່ມ, ນັກຮຽນ, ຜູ້ສູງອາຍຸ ແລະ ຄົນພິການ.

# ມາດຕາ 8



## ເສລີພາບໃນການເດີນທາງຂອງນັກທ່ອງທ່ຽວ

1. ພາຍໃຕ້ກົດໝາຍພາຍໃນ ແລະ ຕ່າງປະເທດ, ນັກທ່ອງທ່ຽວ ແລະ ຜູ້ມາຢ້ຽມຢາມຄວນໄດ້ຮັບຜົນປະໂຫຍຈາກເສລີພາບໃນການເດີນທາງໄປສະຖານທີ່ຕ່າງໆ ພາຍໃນປະເທດ ແລະ ຈາກປະເທດໜຶ່ງໄປອີກປະເທດໜຶ່ງ ດັ່ງທີ່ໄດ້ລະບຸໄວ້ຢູ່ໃນມາດຕາ 13 ຂອງຖະແຫຼງການສາກົນ ວ່າດ້ວຍສິດທິມະນຸດ, ນັກທ່ອງທ່ຽວມີສິດທີ່ຈະເດີນທາງໄປແວະຊົມ ຫຼື ເຂົ້າພັກໃນສະຖານທີ່ຕ່າງໆ ແລະ ມີສິດທີ່ຈະທ່ອງທ່ຽວ ແລະ ເດີນທາງໄປຍັງສະຖານທີ່ທາງວັດທະນະທຳຕ່າງໆ ໂດຍບໍ່ມີການເລືອກປະຕິບັດ ແລະ ພິທີການຫຼາຍເກີນໄປ.

2. ນັກທ່ອງທ່ຽວ ແລະ ຜູ້ມາຢ້ຽມຢາມມີສິດໃນການສື່ສານ ແລະ ຕິດຕໍ່ໃນຮູບແບບຕ່າງໆ ຢູ່ທັງພາຍໃນ ແລະ ຕ່າງປະເທດ ແລະ ສາມາດເຂົ້າເຖິງການບໍລິການທີ່ວ່ອງໄວ ແລະ ສະດວກສະບາຍທີ່ກ່ຽວຂ້ອງກັບສຸຂະພາບ , ກົດໝາຍ ແລະ ການບໍລິຫານພາຍໃນທ້ອງຖິ່ນ. ສາມາດຕິດຕໍ່ກັບສະຖານກົງສຸນຂອງປະເທດຂອງຕົນ ຕາມສົນທິສັນຍາທາງການທູດທີ່ມີຜົນບັງຄັບໃຊ້.

3. ນັກທ່ອງທ່ຽວ ແລະ ຜູ້ມາຢ້ຽມຢາມຄວນໄດ້ຮັບສິດທິເທົ່າທຽມກັນກັບປະຊາຊົນຂອງປະເທດເຈົ້າພາບກ່ຽວກັບການເກັບຮັກສາຂໍ້ມູນສ່ວນຕົວໂດຍສະເພາະເມື່ອມີການຈັດເກັບຂໍ້ມູນໃນຮູບແບບອີເລັກໂທຣນິກ.

4. ຂັ້ນຕອນການບໍລິຫານທີ່ກ່ຽວຂ້ອງກັບການຜ່ານແດນ ບໍ່ວ່າຈະຢູ່ພາຍໃຕ້ຄວາມຄວາມຮັບຜິດຊອບຂອງລັດ ຫຼື ເປັນຜົນຈາກຂໍ້ຕົກລົງສາກົນ ເຊັ່ນ: ວີຊ່າ ຫຼື ການກວດສຸຂະພາບ ແລະ ການເກັບພາສີ ຄວນມີການປັບປຸງໃຫ້ດີ ທັງນີ້ກໍ່ເພື່ອອໍານວຍຄວາມສະດວກ ແກ່ເສລີພາບໃນການເດີນທາງ ແລະ ການທ່ອງທ່ຽວໃນຕ່າງປະເທດໃຫ້ຫຼາຍທີ່ສຸດ. ຄວນມີການສົ່ງເສີມໃຫ້ມີຂັ້ນຕອນຕ່າງໆ ທີ່ສະດວກສະບາຍ ແລະ ບໍ່ຫຍຸ້ງຍາກຫຼາຍ ລະຫວ່າງປະເທດຕ່າງໆ. ຄວນຫຼຸດຜ່ອນ ຫຼື ແກ້ໄຂບັນຫາການເກັບພາສີຈາກອຸດສາຫະກໍາການທ່ອງທ່ຽວ ແລະ ສິ່ງກີດຂວາງດ້ານການແຂ່ງຂັນອື່ນໆລົງ.

5. ຖ້າຫາກສະພາບເສດຖະກິດຂອງປະເທດທີ່ນັກທ່ອງທ່ຽວເດີນທາງມານັ້ນຫາກເອື້ອອໍານວຍແກ່ເຂົາເຈົ້າ, ເຂົາເຈົ້າກໍ່ຄວນໄດ້ຮັບອະນຸຍາດໃຫ້ແລກປ່ຽນເງິນຕາທີ່ຈໍາເປັນສໍາລັບການເດີນທາງໄດ້.

# ມາດຕາ 9



## ສິດທິຂອງຄົນເຮັດວຽກ ແລະ ຜູ້ປະກອບການໃນອຸດສະຫະກຳການທ່ອງທ່ຽວ

1. ສິດທິຂັ້ນພື້ນຖານຂອງຜູ້ທີ່ເຮັດວຽກໂດຍໄດ້ຮັບຄ່າຈ້າງ ຫຼື ຜູ້ປະກອບອາຊີບອິດສະຫຼະໃນອຸດສາຫະກຳການທ່ອງທ່ຽວ ແລະ ກິດຈະກຳອື່ນໆ ທີ່ກ່ຽວຂ້ອງ ຄວນໄດ້ຮັບການປະກັນພາຍໃຕ້ການເບິ່ງແຍງເປັນພິເສດຈາກອົງການບໍລິຫານລະດັບຊາດ ແລະ ລະດັບທ້ອງຖິ່ນ ທັງຢູ່ໃນປະເທດຂອງນັກທ່ອງທ່ຽວເອງ ແລະ ປະເທດເຈົ້າພາບ ເນື່ອງຈາກວ່າມີຂໍ້ຈຳກັດບາງປະການຂອງວຽກຂອງຄົນກຸ່ມນີ້ທີ່ຂຶ້ນກັບລະດູການຂອງອຸດສາຫະກຳການທ່ອງທ່ຽວທີ່ມີຢູ່ທົ່ວໂລກ ແລະ ວຽກງານໃນລັກສະນະນີ້ຕ້ອງມີການຜ່ອນສັ້ນຜ່ອນຍາວ.

2. ຜູ້ທີ່ເຮັດວຽກໂດຍໄດ້ຮັບຄ່າຈ້າງ ຫຼື ຜູ້ປະກອບອາຊີບອິດສະຫຼະໃນອຸດສາຫະກຳການທ່ອງທ່ຽວ ແລະ ກິດຈະກຳອື່ນໆ ທີ່ກ່ຽວຂ້ອງຄວນມີສິດ ແລະ ໜ້າທີ່ໃນການເຂົ້າຝຶກອົບຮົມຂັ້ນພື້ນຖານທີ່ເໝາະສົມ ແລະ ຕໍ່ເນື່ອງ ແລະ ຄວນໄດ້ຮັບການຄຸ້ມຄອງທາງສັງຄົມຢ່າງພຽງພໍ, ມີວຽກງານທີ່ໝັ້ນຄົງ ແລະ ຜູ້ທີ່ເຮັດວຽກຕາມລະດູການໃນອຸດສາຫະກຳການທ່ອງທ່ຽວຄວນໄດ້ຮັບສະຫວັດດີການສັງຄົມທີ່ດີ.

3. ບຸກຄົນທົ່ວໄປ ຫຼື ນິຕິບຸກຄົນ ຫາກມີຄວາມສາມາດ ຫຼື ທັກສະທີ່ຈຳເປັນ ຄວນໄດ້ຮັບສິດໃນການສ້າງກິດຈະກຳວິຊາຊີບດ້ານການທ່ອງທ່ຽວພາຍໃຕ້ກົດໝາຍແຫ່ງຊາດ. ຜູ້ປະກອບການ ແລະ ນັກລົງທຶນ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ຄວນໄດ້ຮັບສິດໃນການເຂົ້າເຖິງພາກການທ່ອງທ່ຽວ ໂດຍມີຂໍ້ຈຳກັດທາງກົດໝາຍ ແລະ ລະບຽບບໍລິຫານໜ້ອຍທີ່ສຸດ.

4. ການແລກປ່ຽນປະສົບການລະຫວ່າງຜູ້ບໍລິຫານ ແລະ ພະນັກງານທີ່ເຮັດວຽກຢູ່ໃນປະເທດຕ່າງໆ ບໍ່ວ່າຈະໄດ້ຮັບຄ່າຈ້າງ ຫຼື ບໍ່ ລ້ວນແລ້ວແຕ່ມີສ່ວນຊ່ວຍໃນການພັດທະນາອຸດສາຫະກຳການທ່ອງທ່ຽວ. ການແລກປ່ຽນນີ້ຄວນໄດ້ຮັບການອຳນວຍຄວາມສະດວກຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ໂດຍສອດຄ່ອງກັບກົດໝາຍແຫ່ງຊາດ ແລະ ສົນທິສັນຍາລະຫວ່າງປະເທດ.

5. ໃນສະພາບການທີ່ໂລກມີຄວາມເປັນອັນໜຶ່ງອັນດຽວກັນຫຼາຍຂຶ້ນ ເນື່ອງຈາກວ່າມີການປ່ຽນແປງຢ່າງຕໍ່ເນື່ອງ, ມີການໄປມາຫາສູ່ກັນຫຼາຍຂຶ້ນ ແລະ ມີການຈັດຕັ້ງວິສາຫະກິດຂ້າມຊາດໃນອຸດສາຫະກຳການທ່ອງທ່ຽວທີ່ມີເຄືອຂ່າຍຄວບຄຸມຢ່າງກວ້າງຂວາງ, ບໍ່ຄວນໃຊ້ວິສາຫະກິດຂ້າມຊາດເຫຼົ່ານີ້ເປັນຫົນທາງໃນການຄອບຄອງປະເທດທີ່ຕ້ອນຮັບນັກທ່ອງທ່ຽວໃຫ້ປ່ຽນແປງຮູບແບບທາງວັດທະນະທຳ ແລະ ສັງຄົມ ໃຫ້ກາຍເປັນຮູບແບບທີ່ບໍ່ຖືກຕ້ອງ, ບໍ່ເປັນທຳມະຊາດ, ບໍ່ຄວນນຳເອົາວິສາຫະກິດຂ້າມຊາດເປັນຂໍ້ຕໍ່ລອງ ເພື່ອແລກປ່ຽນກັບເສລີພາບດ້ານການລົງທຶນ ແລະ ການຄ້າ, ຄວນນຳເອົາວິສາຫະກິດຂ້າມຊາດມາໃຊ້ໃນທາງທີ່ຈະສ້າງຜົນ

ປະໂຫຍດຕໍ່ການພັດທະນາທ້ອງຖິ່ນຂອງປະເທດທີ່ເປີດຮັບນັກທ່ອງທ່ຽວ , ບໍ່ຄວນໃຊ້ວິສາຫະກິດຂ້າມຊາດ ເປັນບ່ອນສ້າງຜົນປະໂຫຍດໃນການສົ່ງຜົນກຳໄລກັບໄປຫາບໍລິສັດແມ່ ແລະ ບໍ່ຄວນໃຊ້ວິສາຫະກິດຂ້າມຊາດເຫຼົ່ານີ້ເປັນຫົນທາງໃນການນຳເຂົ້າສິນຄ້າ ແລະ ການບໍລິການທີ່ເກີນຄວາມເປັນຈິງ ຫຼື ຈຳກັດການມີສ່ວນຮ່ວມທາງເສດຖະກິດຢູ່ພາຍໃນປະເທດທີ່ເປີດເປັນແຫຼ່ງທ່ອງທ່ຽວ.

6. ການຮ່ວມມື ແລະ ການສ້າງສາຍພົວພັນທີ່ດີລະຫວ່າງ ບໍລິສັດຕ່າງໆ ຂອງປະເທດຜູ້ຜະລິດນັກທ່ອງທ່ຽວ ແລະ ປະເທດເຈົ້າພາບ ຈະເປັນປັດໄຈທີ່ຈະນຳໄປສູ່ການພັດທະນາການທ່ອງທ່ຽວແບບຍືນຍົງ ແລະ ການກະຈາຍຜົນປະໂຫຍດທີ່ໄດ້ຈາກການພັດທະນາຢ່າງສະເໝີພາບ.

# ມາດຕາ 10

## ການຈັດຕັ້ງປະຕິບັດຫຼັກການຂອງຫຼັກຈັນຍາບັນການທ່ອງທ່ຽວທ່ຽວໂລກ

1. ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກເອກະຊົນໃນການພັດທະນາການທ່ອງທ່ຽວ ຄວນໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ ແລະ ກວດສອບປະສິດທິພາບຂອງການໃຊ້ຫຼັກການເຫຼົ່ານີ້.

2. ພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ ຄວນຄຳນຶງ ແລະ ຍອມຮັບບົດບາດຂອງອົງການລະຫວ່າງປະເທດຕ່າງໆ ໂດຍມີອົງການທ່ອງທ່ຽວໂລກເປັນອົງການທີ່ມີບົດບາດສຳຄັນຫຼາຍທີ່ສຸດ ແລະ ບັນດາອົງການທີ່ບໍ່ສັງກັດລັດທີ່ກ່ຽວຂ້ອງກັບການສົ່ງເສີມ ແລະ ພັດທະນາການທ່ອງທ່ຽວ, ການປົກປ້ອງສິດທິມະນຸດ, ສິ່ງແວດລ້ອມ ຫຼື ສຸຂະພາບຕາມຫຼັກການທົ່ວໄປຂອງກົດໝາຍສາກົນ.

3. ພາກສ່ວນທີ່ກ່ຽວຂ້ອງເຫຼົ່ານີ້ ຄວນສະແດງເຈດຈຳນົງເພື່ອສົ່ງຕໍ່ກໍລະນີມີຂໍ້ຂັດແຍ່ງຕ່າງໆ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ ແລະ ການແປຫຼັກຈັນຍາບັນການທ່ອງທ່ຽວໂລກໃຫ້ແກ່ບຸກຄົນທີສາມ ທີ່ເປັນຄົນກາງ ເຊັ່ນ: ຄະນະກຳມາທິການຈັນຍາບັນການທ່ອງທ່ຽວໂລກເປັນຜູ້ຕັດສິນໄກ່ເກ່ຍ.

## ຂະບວນການໃຫ້ຄໍາປຶກສາ ແລະ ໄກ່ເກ່ຍ ເພື່ອຫາຂໍ້ຍຸດຕິກໍລະນີມີຂໍ້ຂັດແຍ່ງໃນການຈັດຕັ້ງປະຕິບັດຫຼັກຈັນຍາບັນການທ່ອງທ່ຽວໂລກ

ຂະບວນການນີ້ ໄດ້ຖືກຮັບຮອງໂດຍຄະນະກໍາມາທິການຈັນຍາບັນການທ່ອງທ່ຽວໂລກ ໃນເດືອນຕຸລາ ປີ 2004 [WCTE/DEC/4(II)] ແລະ ຮັບຮອງຢ່າງເປັນທາງການຢູ່ທີ່ກອງປະຊຸມສະມັດຊາໃຫຍ່ຂອງອົງການທ່ອງທ່ຽວໂລກ ແຫ່ງສະຫະປະຊາຊາດມະຕິທີ A/RES/506(XVI) ເດືອນທັນວາ ປີ 2005.

1. ໃນກໍລະນີມີຂໍ້ຂັດແຍ່ງໃນການແປຄວາມໝາຍ ຫຼື ການໃຊ້ຫຼັກຈັນຍາບັນການທ່ອງທ່ຽວໂລກ, ພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ[1] ສອງຝ່າຍ ຫຼື ຫຼາຍຝ່າຍ ສາມາດຍື່ນຂໍ້ຂັດແຍ່ງດັ່ງກ່າວ (ໃນນີ້ເອີ້ນວ່າ "ຂໍ້ຂັດແຍ່ງ") ໄປຫາຄະນະກໍາມາທິການຈັນຍາບັນການທ່ອງທ່ຽວ

[1] ສໍາລັບຫຼັກຈັນຍາບັນນີ້ ຄໍາວ່າ "ພາກສ່ວນທີກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ" ໝາຍເຖິງ: ລັດຖະບານແຫ່ງຊາດ, ລັດຖະບານທ້ອງຖິ່ນທີ່ມີໜ້າທີ່ກ່ຽວຂ້ອງກັບການທ່ອງທ່ຽວ, ສະຖານປະກອບການ ແລະ ຫົວໜ່ວຍທຸລະກິດທ່ອງທ່ຽວຕ່າງໆ ເຊັ່ນ: ສະມາຄົມ, ອົງການຕ່າງໆທີ່ກ່ຽວຂ້ອງໃນການສະໜັບສະໜູນທາງການເງິນແກ່ໂຄງການການທ່ອງທ່ຽວ, ພະນັກງານທີ່ເຮັດວຽກກ່ຽວກັບການທ່ອງທ່ຽວ, ຜູ້ປະກອບການການທ່ອງທ່ຽວ ແລະ ຜູ້ໃຫ້ຄໍາປຶກສາທາງການທ່ອງທ່ຽວ, ກໍາມະບານຂອງພະນັກງານທີ່ເຮັດວຽກກ່ຽວກັບການທ່ອງທ່ຽວ, ນັກເດີນທາງ ຊຶ່ງລວມມີ: ນັກເດີນທາງທຸລະກິດ ແລະ ຜູ້ມາຢ້ຽມຢາມສະຖານທີ່ທ່ອງທ່ຽວ, ປະຊາຊົນໃນທ້ອງຖິ່ນ ແລະ ຊຸມຊົນເຈົ້າພາບທີ່ຢູ່ໃນແຫຼ່ງທ່ອງທ່ຽວ ໂດຍຜ່ານຕົວແທນ, ບຸກຄົນ ແລະ ນິຕິບຸກຄົນອື່ນໆ ທີ່ມີສ່ວນກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ ເຊັ່ນ: ອົງການທີ່ບໍ່ສັງກັດລັດທີ່ມີຄວາມຊໍານານໃນການທ່ອງທ່ຽວ ແລະ ກ່ຽວຂ້ອງກັບໂຄງການການທ່ອງທ່ຽວ ແລະ ການຈັດຫາການບໍລິການການທ່ອງທ່ຽວ.

ໂລກ (ໃນນີ້ເອີ້ນວ່າ “ຄະນະກຳມາທິການ”) ໃນຖານະທີ່ເປັນໜ່ວຍງານທີ່ສັງກັດຢູ່ໃນອົງການການທ່ອງທ່ຽວໂລກ ທີ່ສາມາດແກ້ບັນຫາຂໍ້ຂັດແຍ່ງໄດ້.

2. ປະທານຄະນະກຳມາທິການຢັ້ງຢືນການຮັບຮູ້ວ່າໄດ້ຮັບຂໍ້ຂັດແຍ່ງເປັນລາຍລັກອັກສອນທີ່ສົ່ງໄປຫາຄູ່ກໍລະນີ ແລະ ສັ່ງໃຫ້ເລຂາທິການເຂົ້າຮ່ວມປະຊຸມປຶກສາຫາລື ກັບຄູ່ກໍລະນີ ເພື່ອກຽມລາຍງານສະເໜີໄປຫາຄະນະກຳມາທິການພາຍໃນ 30 ວັນ ຊຶ່ງໃນການລາຍງານນີ້ຕ້ອງມີຂໍ້ມູນທີ່ກ່ຽວຂ້ອງທີ່ເປັນຄວາມຈິງ, ຈຸດຢືນຂອງຄູ່ກໍລະນີ ແລະ ຄຳແນະນຳຈາກເລຂາທິການທີ່ກ່ຽວຂ້ອງກັບປະເດັນຕ່າງໆ ທີ່ຄະນະກຳມາທິການອາດເຫັນດີເປັນເອກະພາບແລ້ວ. ຖ້າຫາກໃນລະຫວ່າງຂະບວນການປຶກສາຫາລືນັ້ນເລຂາທິການ ແລະ ຄູ່ກໍລະນີສາມາດຕົກລົງກັນໄດ້, ກໍ່ສາມາດຍອມຮັບມາດຕະການ ເພື່ອຍຸດຕິຂໍ້ຂັດແຍ່ງນັ້ນໄດ້. ເນື້ອໃນຂອງການຕົກລົງນັ້ນຕ້ອງໄດ້ບັນທຶກໄວ້ຢູ່ໃນບົດລາຍງານຂອງເລຂາທິການ ເພື່ອໃຫ້ຄະນະກຳມາທິການໄດ້ພິຈາລະນາ. ຖ້າວ່າເລຂາທິການຫາກມີການຮ້ອງຂໍ, ຄະນະກຳມາທິການອາດຈະເລື່ອນເວລາກຳນົດສົ່ງບົດລາຍງານອອກໄປກໍ່ໄດ້.

3. ຄະນະກຳມາທິການພິຈາລະນາກວດສອບບົດລາຍງານຂອງເລຂາທິການຫຼັງຈາກໄດ້ຮັບບົດລາຍງານແລ້ວ ແລະ ພິຈາລະນາໃຫ້ຄຳແນະນຳໃນການຍຸດຕິຂໍ້ຂັດແຍ່ງກັບຄູ່ກໍລະນີ, ຄະນະກຳມາທິການອາດແຕ່ງຕັ້ງຄະນະລູກຂຸນຈຳນວນ 3 ທ່ານ ເພື່ອເຮັດໜ້າທີ່ຮ່າງຂໍ້ສະເໜີໃຫ້ຄະນະກຳມາທິການອະນຸມັດຕາມຫຼັກການທົ່ວໄປ, ຄະນະລູກຂຸນຕ້ອງກະກຽມຮ່າງຂໍ້ສະເໜີພາຍຂອງຄະນະກຳມາທິການ ຫຼັງຈາກໄດ້ຮັບບົດລາຍງານຂອງເລຂາທິ

ການແລ້ວ ແຕ່ຖ້າເຫັນວ່າເນື້ອໃນຂອງຂໍ້ຂັດແຍ່ງ ແລະ ເຫດຜົນອື່ນໆ ມີຄວາມເໝາະສົມແລ້ວ, ໃຫ້ເລື່ອນເວລາປຶກສາຫາລືກ່ຽວກັບປະເດັນທີ່ກ່ຽວຂ້ອງອອກໄປ. ຄະນະກຳມາທິການອາອະນຸຍາດໃຫ້ຄະນະລູກຂຸນສົ່ງຮ່າງຂໍ້ສະເໜີໃນສະໄໝປະຊຸມຕໍ່ໄປ.

4. ໃນການກຽມຮ່າງຂໍ້ສະເໜີ, ຄະນະລູກຂຸນທີ່ໄດ້ຮັບການແຕ່ງຕັ້ງຈາກຄະນະກຳມາທິການ ອາດຈະເຂົ້າໄປປຶກສາຫາລືກັບຄູ່ກໍລະນີ ໂດຍການປຶກສາດັ່ງກ່າວສາມາດຈັດຂຶ້ນໂດຍຄະນະກຳມາທິການ ຫຼື ຄະນະລູກຂຸນຕາມຄຳຮ້ອງຂໍຂອງຄູ່ກໍລະນີຝ່າຍໃດກໍໄດ້ ໃນຊ່ວງເວລາໃດກໍໄດ້. ໃນລະຫວ່າງການພິຈາລະນາຂໍ້ຂັດແຍ່ງ ຄະນະກຳມາທິການ ແລະ ຄະນະລູກຂຸນທີ່ຖືກແຕ່ງຕັ້ງໂດຍ ຄະນະກຳມາທິການ ອາດຈະລົງຄວາມຄິດເຫັນເປັນເອກະສັນຮັບວິທີການສະເພາະບາງຢ່າງໃນການພິຈາລະນາຂໍ້ຂັດແຍ່ງ, ຂັ້ນຕອນການພິຈາລະນາ, ຂໍ້ຂັດແຍ່ງຂອງຄະນະກຳມາທິການ ແລະ ຄະນະລູກຂຸນທີ່ແຕ່ງຕັ້ງໂດຍຄະນະກຳມາທິການຕ້ອງຜ່ານຄວາມໄວ້ວາງໃຈໂດຍຂຶ້ນຢູ່ກັບບົດບັນຍັດຢູ່ໃນຂໍ້ 5 ດັ່ງຂ້າງລຸ່ມນີ້.

5. ໃນການອະນຸມັດຂໍ້ສະເໜີໃຫ້ແກ່ຄູ່ກໍລະນີ, ຄະນະກຳມາທິການຕ້ອງຕັດສິນໃຈພາຍໃນຊ່ວງເວລາທີ່ຄູ່ກໍລະນີຄວນປະຕິບັດຕາມຂໍ້ສະເໜີນັ້ນ, ເລຂາທິການຕ້ອງລາຍງານແກ່ຄະນະກຳມາທິການ. ຫຼັງຈາກນັ້ນ, ຄະນະກຳມາທິການຈະພິຈາລະນາລາຍງານດັ່ງກ່າວ ແລະ ອອກຖະແຫຼງຂ່າວກ່ຽວກັບເນື້ອໃນການຍຸດຕິຂໍ້ພິພາກຫາກມີການປະຕິບັດຕາມຂໍ້ສະເໜີ ຖ້າຂໍ້ສະເໜີໜຶ່ງ ຫຼື ຫຼາຍກວ່ານັ້ນບໍ່ໄດ້ຮັບການປະຕິບັດຕາມ, ຄະນະກຳມາທິການຈະຕ້ອງຕັດສິນໃຈວ່າຈະພິຈາລະນາດຳເນີນການໃນສ່ວນທີ່ກ່ຽວ

ຂ້ອງຕໍ່ໄປແບບໃດ ເຊິ່ງລວມເຖິງການຈັດການປຶກສາຫາລືກັບຄູ່ກໍລະນີໃໝ່ ແລະ ການອອກຖະແຫຼງຂ່າວກ່ຽວກັບຂໍ້ສະຫຼຸບຂອງຄະນະກຳມາທິການ.

6. ຄະນະກຳມາທິການສາມາດພິຈາລະນາບັນຫາທີ່ພາກສ່ວນທີ່ກ່ຽວຂ້ອງເປັນບຸນຄົນ ຫຼື ປະເທດສະມາຊິກທີ່ຍື່ນມານັ້ນ ຊຶ່ງກ່ຽວກັບການຈັດຕັ້ງປະຕິບັດຫຼັກຈັນຍາບັນການທ່ອງທ່ຽວໂລກ. ຖ້າເຫັນວ່າບັນຫານັ້ນຫາກມີຄວາມເໝາະສົມ, ຄະນະກຳມາທິການກໍ່ສາມາດອອກໃຫ້ຄຳຊີ້ແຈງ ຫຼື ຄຳແນະນຳ ເພື່ອໃຫ້ເປັນແບບຢ່າງທີ່ດີໃນການຊີ້ນຳແນວທາງໃນຕໍ່ໜ້າ.

7. ຄະນະກຳມາທິການລາຍງານຢູ່ກອງປະຊຸມສະມັດຊາໃຫຍ່ກ່ຽວກັບ ການປະຕິບັດ ແລະ ການແປຄວາມໝາຍທີ່ໄດ້ຮັບລາຍງານ.

8. ຄ່າໃຊ້ຈ່າຍທີ່ເກີດຂຶ້ນລະຫວ່າງການປຶກສາຫາລື ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງກັບການເຮັດວຽກຂອງຄະນະກຳມາທິການ ແລະ ກອງເລຂາກ່ຽວກັບການພິຈາລະນາຂໍ້ພິພາກ ອາດເປັນຄວາມຮັບຜິດຊອບຂອງຄູ່ກໍລະນີ ຖ້າວ່າຂໍ້ພິພາກນັ້ນຫາກບໍ່ໄດ້ຮັບການພິຈາລະນາຈາກຈາກຄະນະກຳມາທິການກໍ່ຈະໄດ້ຮັບການຍົກເວັ້ນ.

9. ຄະນະກຳມາທິການຕ້ອງໄດ້ທົບທວນຂະບວນການເຫຼົ່ານີ້ຄືນ ຫຼັງຈາກ 3 ປີ ທີ່ໄດ້ຮັບອະນຸມັດຈາກສະມັດຊາໃຫຍ່ ເນື່ອງຈາກວ່າມີປະສົບການທີ່ໄດ້ຮັບຈາກການປະຕິບັດຕົວຈິງ ໃນສະພາວະນັ້ນຄະນະກຳມາທິການອາດຈະກວດສອບວິທີການທີ່ກ່ຽວຂ້ອງທີ່ໄດ້ໃຊ້ ແລະ ຈຳເປັນ ແລະ

ເມື່ອສໍາເລັດການທົບທວນຂະບວນການແລ້ວ, ຄະນະກໍາມາທິການສາມາດຕັດສິນໃຈວ່າຈະສົ່ງມອບອໍານາດການປະຕິບັດຕາມຂະບວນການໃຫ້ແກ່ຄະນະກໍາມາທິການໃນພື້ນທີ່ຫຼືບໍ່ ແລະ ໃນຮູບແບບໃດ ໂດຍຕ້ອງໄດ້ຄໍານຶງເຖິງຄວາມຈໍາເປັນໃນການຮັກສາຄວາມສອດຄ່ອງ ແລະ ຄວາມຕໍ່ເນື່ອງໃນການປັບໃຊ້ ແລະ ການແປຄວາມໝາຍຫຼັກຈາກຈັນຍາບັນການທ່ອງທ່ຽວໂລກ.

## ແນວທາງການພິຈາລະນາຂໍ້ຂັດແຍ່ງ

ຮັບຮອງໂດຍຄະນະກໍາມາທິການຈັນຍາບັນການທ່ອງທ່ຽວໂລກ ໃນເດືອນພຶດສະພາ 2005 [WCTE/DEC/3(III)] ແລະ ຮັບຮອງໂດຍກອງປະຊຸມສະມັດຊາໃຫຍ່ອົງການທ່ອງທ່ຽວໂລກ ມະຕິທີ A/RES/506(XVI) ເດືອນທັນວາ 2005.

1. ຄະນະກໍາມາທິການຈັນຍາບັນການທ່ອງທ່ຽວໂລກໄດ້ສ້າງຕັ້ງຂຶ້ນໂດຍກອງປະຊຸມສະມັດຊາອົງການທ່ອງທ່ຽວໂລກ ແນໃສ່ເພື່ອສົ່ງເສີມການຍອມຮັບ ແລະ ການຈັດຕັ້ງປະຕິບັດຫຼັກການຂອງພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາການທ່ອງທ່ຽວ.

2. ວັກທີ 1 ຂະບວນການປຶກສາຫາລື ແລະ ແກ້ໄຂຂໍ້ຂັດແຍ່ງໃນກໍລະນີມີການຜິດຖຽງກັນລະຫວ່າງສອງ ຫຼື ຫຼາຍພາກສ່ວນອາດພ້ອມກັນສົ່ງຂໍ້ຂັດແຍ່ງດັ່ງກ່າວໄປຫາຄະນະກໍາມະທິການດັ່ງກ່າວ.

3. ຖ້າຫາກບໍ່ສົ່ງຂໍ້ຂັດແຍ່ງຂອງທຸກພາກສ່ວນທີ່ມີສ່ວນຮ່ວມໄປພ້ອມກັນ, ຄະນະກໍາມາທິການດັ່ງກ່າວກໍ່ຈະບໍ່ມີການພິຈາລະນາ. ເຖິງແນວໃດກໍ່ຕາມ, ບັນຫາດັ່ງກ່າວທີ່ກ່ຽວຂ້ອງກັບການໝູນໃຊ້ຫຼັກຈັນຍາບັນການທ່ອງທ່ຽວກໍ່ອາດສົ່ງໄປຫາຄະນະກໍາມາທິການຝ່າຍດຽວກໍ່ໄດ້ ແລະ ອາດມີຂໍ້ອ້າງອີງກ່ຽວກັບຂໍ້ຂັດແຍ່ງສະເພາະໃດໜຶ່ງດັ່ງທີ່ໄດ້ສະແດງອອກຢູ່ໃນຫຼັກການທີ່ເປັນແບບຄໍາຖາມ ແລະ ຜູ້ທີ່ສົ່ງຂໍ້ຂັດແຍ່ງດັ່ງກ່າວນັ້ນແມ່ນບໍ່ມີສ່ວນກ່ຽວຂ້ອງກັບຂໍ້ຂັດແຍ່ງນັ້ນ.

4. ຄະນະກໍາມາທິການອາດສະເໜີແນວຄວາມຄິດຂອງຕົນເອງກ່ຽວກັບການຢັ້ງຢືນຫຼັກຈັນຍາບັນທີ່ລະບຸຢູ່ໃນປຶ້ມຫົວນີ້.

## ຫຼັກການທີ່ໃຊ້ສໍາລັບການອ້າງອີງ

- ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ ລົງວັນທີ 10 ທັນວາ 1948.
- ຂໍ້ຕົກລົງລະຫວ່າງປະເທດວ່າດ້ວຍສິດທິທາງເສດຖະກິດ-ສັງຄົມ ແລະ ວັດທະນາທໍາ ລົງວັນທີ 16 ທັນວາ 1966.
- ຂໍ້ຕົກລົງລະຫວ່າງປະເທດວ່າດ້ວຍສິດທິພົນລະເຮືອນ ແລະ ສິດທິທາງການເມືອງ ລົງວັນທີ 16 ທັນວາ 1966.
- ສົນທິສັນຍາວໍຊໍວ່າດ້ວຍການຂົນສົ່ງທາງອາກາດ ລົງວັນທີ 12 ຕຸລາ 1929.
- ສົນທິສັນຍາຊິຄາໂກ້ ວ່າດ້ວຍການບິນພົນລະເຮືອນນານາຊາດ ລົງວັນທີ 7 ທັນວາ 1944 ແລະ ສົນທິສັນຍາໂຕກຽວ, ສົນທິສັນຍາເຮກ ແລະ ສົນທິສັນຍາມອນທຣິອອນ ທີ່ກ່ຽວຂ້ອງກັບການບິນພົນລະເຮືອນນານາຊາດ;
- ສົນທິສັນຍາ ວ່າດ້ວຍການອໍານວຍຄວາມສະດວກດ້ານພາສີສໍາລັບການທ່ອງທ່ຽວ ລົງວັນທີ 4 ກໍລະກົດ 1954 ແລະ ສົນທິສັນຍາທີ່ກ່ຽວຂ້ອງ.
- ສົນທິສັນຍາທີ່ກ່ຽວກັບການຄຸ້ມຄອງມໍລະດົກໂລກທາງດ້ານວັດທະນະທໍາ ແລະ ທໍາມະຊາດ ລົງວັນທີ 23 ພະຈິກ 1972.
- ຖະແຫຼງການມະນິລາວ່າດ້ວຍການທ່ອງທ່ຽວໂລກ ລົງວັນທີ 10 ຕຸລາ 1980.
- ມະຕິກອງປະຊຸມສະມັດຊາໃຫຍ່ຄັ້ງທີ 6 ຂອງອົງການການທ່ອງທ່ຽວໂລກ (ກຸງໂຊເຟຍ) ທີ່ເຫັນດີກັບກົດບັດສິດທິການທ່ອງທ່ຽວ ແລະ ກົດນັກທ່ອງທ່ຽວ ລົງວັນທີ 26 ກັນຍາ 1985.
- ສົນທິສັນຍາ ວ່າດ້ວຍສິດທິເດັກ ລົງວັນທີ 20 ພະຈິກ 1989.

- ມະຕິກອງປະຊຸມສະມັດຊາໃຫຍ່ອົງການການທ່ອງທ່ຽວໂລກ ຄັ້ງທີ 9 (ທີ່ ກຸງບົວໂນສະໄອເຣດ) ກ່ຽວກັບການອຳນວຍຄວາມສະດວກໃນການເດີນທາງ ແລະ ຄວາມປອດໄພຂອງນັກທ່ອງທ່ຽວ ລົງວັນທີ 4 ຕຸລາ 1991.
- ຖະແຫຼງການຣີໂອ ວ່າດ້ວຍການພັດທະນາ ແລະ ສິ່ງແວດລ້ອມ ລົງວັນທີ 13 ມິຖຸນາ 1992.
- ຂໍ້ຕົກລົງທົ່ວໄປ ວ່າດ້ວຍການຄ້າດ້ານການບໍລິການ ລົງວັນທີ 15 ເມສາ 1994.
- ສົນທິສັນຍາ ວ່າດ້ວຍຄວາມຫຼາກຫຼາຍທາງຊີວະນານາພັນ ລົງວັນທີ 6 ມັງກອນ 1995.
- ມະຕິກອງປະຊຸມສະມັດຊາໃຫຍ່ອົງການທ່ອງທ່ຽວໂລກຄັ້ງທີ 11 (ທີ່ ກຸງໄຄໂຣ) ວ່າດ້ວຍການຈັດການທ່ອງທ່ຽວເອການປະເວນີ ລົງວັນທີ 22 ຕຸລາ 1995.
- ຖະແຫຼງການສະຕ໋ອກໂຮມ ລົງວັນທີ 28 ສິງຫາ 1996 ວ່າດ້ວຍການຕໍ່ຕ້ານການໃຊ້ປະໂຫຍດຈາກການຄ້າປະເວນີເດັກນ້ອຍ;
- ຖະແຫຼງການມະນີລາ ວ່າດ້ວຍຜົນກະທົບທາງສັງຄົມຈາກການທ່ອງທ່ຽວ ລົງວັນທີ 22 ພຶດສະພາ 1997.
- ສົນທິສັນຍາ ແລະ ຂໍ້ສະເໜີຕ່າງໆ ທີ່ອົງການແຮງງານສາກົນເຫັນດີໃຫ້ຖືປະຕິບັດໃນຂອບເຂດຂອງສົນທິສັນຍາຮ່ວມດ້ານການຫ້າມການບັງຄັບໃຊ້ແຮງງານ ແລະ ແຮງງານເດັກ, ການຕໍ່ສູ້ເພື່ອສິດທິຂອງຄົນພື້ນເມືອງ, ການປະຕິບັດທີ່ເທົ່າທຽມກັນ ແລະ ການບໍ່ເລືອກປະຕິບັດໃນສະຖານທີ່ເຮັດວຽກ.

**ຮຽບຮຽງ ແລະ ແປໂດຍ:**

**ທ່ານ ພູທອນ ດາລາລົມ**

ຮອງຫົວໜ້າພະແນກຝຶກອົບຮົມວິຊາການການທ່ອງທ່ຽວ

ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ

**ກວດແກ້ໂດຍ:**

**ທ່ານ ທະວິເພັດ ອຸລາ**
ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ

**ທ່ານ ນາງ ດາລານີ ພົມມະວົງສາ**
ຮອງຫົວໜ້າສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ

**ສະໜັບສະໜູນ:**

ໂຄງການພັດທະນາພື້ນຖານໂຄງລ່າງເພື່ອສົ່ງເສີມການທ່ອງທ່ຽວ (ADB)